ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 5:
## The Epic Story of "Thao Hung - Thao Cheuang"

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 5:** ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desired Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ຄວາມເປັນມາຂອງເລື່ອງ<br>- ເລື່ອງທ້າວຮຸ່ງ-ທ້າວເຈືອງທັງສາມສະບັບໂດຍສັງເຂບ<br>- ບາງຄໍາເຫັນກ່ຽວກັບການກໍາເນີດຄໍາກອນ<br>- ບາງຄໍາເຫັນກ່ຽວກັບຕົວລະຄອນທ້າວຮຸ່ງ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ຄວາມເປັນມາຂອງເລື່ອງ<br>- ເລື່ອງທ້າວຮຸ່ງ-ທ້າວເຈືອງທັງສາມສະບັບໂດຍສັງເຂບ<br>- ບາງຄໍາເຫັນກ່ຽວກັບການກໍາເນີດຄໍາກອນ<br>- ບາງຄໍາເຫັນກ່ຽວກັບຕົວລະຄອນທ້າວຮຸ່ງ</td><td>ຄໍາຖາມຫຼັກ (Questions):<br>1) ມະຫາກາບທ້າວຮຸ່ງ-ທ້າວເຈືອງເປັນເລື່ອງແນວໃດ?<br>2) ເລື່ອງທ້າວຮຸ່ງ-ທ້າວເຈືອງແຕ່ງເປັນຄໍາກອນແບບໃດ? ແລະ ກໍາເນີດໃນສະໄໝໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມເປັນມາຂອງເລື່ອງທ້າວຮຸ່ງ-ທ້າວເຈືອງ ແລະ ບາງຄໍາຄິດເຫັນຕ່າງໆກ່ຽວກັບບົດເລື່ອງດັ່ງກ່າວ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງຄວາມເປັນມາ, ບັນຫາຄໍາກອນ ແລະຕົວລະຄອນທ້າວຮຸ່ງ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນໍາການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄໍາຕອບກິດຈະກໍາຂອງນັກສຶກສາ<br>- ການສັງຣວມກິດຈະກໍາ<br>- ຜົນການກວດວຽກບ້ານ</td></tr>
</table>

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**
  - ປື້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປື້ມບົດມະຫາກາບທ້າວຮຸ່ງ-ທ້າວເຈືອງ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.
- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນວັນນະຄະດີ ແລະ ສິລະປະການປະດິດແຕ່ງ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**

**ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ"**

**3.1 ຄວາມເປັນມາຂອງເລື່ອງ** (15 ນາທີ)

<u>ກິດຈະກຳ 1:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປື້ມຕຳລາ
  1) ມະຫາກາບທ້າວຮຸ່ງ-ທ້າວເຈືອງເປັນເລື່ອງແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ເລື່ອງ ທ້າວຮຸ່ງ - ທ້າວເຈືອງມີລັກສະນະພິເສດທັງອຸດົມສົມບູບຫຼາຍດ້ານເຊິ່ງບໍ່ເໝືອນກັບເລື່ອງໃດຂອງລາວທາງດ້ານຮູບການ, ສິລະປະການປະພັນ ແລະ ເນື້ອໃນ, ຖືວ່າເປັນບົດວັນນະກຳຊັ້ນຍອດຂອງລາວອີກສະບັບໜຶ່ງເປັນຕົ້ນແມ່ນ:

- ວັນນະຄະດີເລື່ອງໜຶ່ງທີ່ປາສະຈາກອິດທິພົນຄອບງຳສາສະໜາ ຫຼື ເວົ້າອີກຢ່າງໜຶ່ງວ່າ (ບໍ່ແມ່ນເລື່ອງເທບນິ ຍາຍ) ຄືກັບເລື່ອງປູ່ເຍີ - ຍ່າເຍີ, ປາສະຈາກຮ່ອງຮອຍຂອງເທບພະເຈົ້າ, ເປັນນິຍາຍແອ້ມປະຫວັດ ສາດເຊິ່ງໄດ້ກ່າວເຖິງປະຫວັດການເຄື່ອນໄຫວໃນຂັ້ນຕອນໃດໜຶ່ງຂອງປະຫວັດສາດ, ຢູ່ໃນພູມຖານບໍລິ ເວນໃດໜຶ່ງຂອງລາວໃນສະໄໝກ່ອນເຈົ້າຟ້າງຸ່ມນັບວ່າໃນຊ່ວງໄລຍະປະຫວັດສາດທີ່ຍັງຫ່າງໄກ ແລະ ມືດມົນຫຼາຍສົມຄວນຢູ່.
- ເປັນເລື່ອງທີ່ແຕ້ມໄປດ້ວຍສີສັນ ແລະ ອຸດົມສົມບູນທາງດ້ານພາສາ ແລະ ສຳນວນລາວເດີມທີ່ແທ້ຈິງ, ພ້ອມທັງເປັນເລື່ອງທີ່ຖືກຕ້ອງຕາມຫຼັກສັນທະກະວິ.
- ເປັນເລື່ອງທີ່ບັນຈຸໄປດ້ວຍວັດທະນະທຳ, ຮີດຄອງປະເພນີຂະນົບທຳນຽມ ແລະ ແບບແຜນການດຳລົງຊີວິດທີ່ມີຫຼາຍລັດຫຼາຍຊາດຂອງບັນດາຊົນເຜົ່າໃນຊາດຕະຫຼອດເຖິງຮູບແບບການຈັດຕັ້ງປົກຄອງ, ດ້ານສັງຄົມແຫ່ງຍຸກສະໄໝດັ່ງກ່າວຢ່າງໜ້າອັດສະຈັນ.

ດັ່ງນັ້ນ, ການສຶກສາຄົ້ນຄວ້າເລື່ອງທ້າວຮຸ່ງ - ທ້າວເຈືອງ, ຍອມຮັບວ່າແມ່ນການສຶກສາຄົ້ນຄວ້າ ແລະ ຊອກຂໍ້ມູນຫຼາຍດ້ານທີ່ບັນຈຸໃນເລື່ອງ ແລະ ກໍຖືໄດ້ວ່າເປັນການເປີດປະຕູໄປສູ່ສ້າງຂຶ້ນມູນທີ່ຫາໄດ້ຍາກທີ່ສຸດເພື່ອໄປສູ່ການຄົ້ນຄວ້າທາງດ້ານປະຫວັດສາດ, ພູມສາດ, ການປະຄອງ, ວັດທະນະທຳປະເພນີຮີດຄອງ, ເຜົ່າພັນວິທະຍາ, ພາສາອັກສອນສາດ ແລະ ອື່ນໆອີກດ້ວຍ.

ວັນນະກຳເລື່ອງທ້າວຮຸ່ງ - ທ້າວເຈືອງ, ກ່ອນນີ້ຫຼາຍທົດສະວັດໄດ້ຕົກຢູ່ໃນກຳມື້ຂອງສະຫຍາມ ແລະ ເກັບມ້ຽນໄວ້ໃນຫໍສະໝຸດບາງກອກປະເທດໄທໃນສະພາບເກືອບໝົດໂອກາດຈົນຮອດປີ 1942, ທ່ານມະຫາສີລາ ວິລາວົງ, ຈຶ່ງພົບຕົ້ນສະບັບທີ່ຂຽນໃບລານຈາລຶກດ້ວຍອັກສອນລາວເດີມ. ທຳອິດທ່ານໄດ້ຄົ້ນພົບສະບັບທີ່ຂຽນດ້ວຍອັກສອນໄທໃສ່ເຈ້ຍສາເຊິ່ງມີຂໍ້ຄວາມບອກວ່າ: ພະເຈົ້າແຜນດິນອົງທີ 5 ຄື ພະຈຸລະຈອມເກົ້າສັ່ງໃຫ້ກົມສະໝຽນກ່າຍອອກມາຈາກໃບລານທີ່ຂຽນດ້ວຍອັກສອນລາວ, ທັງສອງສະບັບທຽບກັນແມ່ນເລື່ອງດຽວກັນ ແລະ ມີຂໍ້ຄວາມບອກໄວ້ວ່າ: ສີສຸນິນ ບ້ານວັງບານໄດ້ຂຽນເຈືອງກວ້າງຜູກນີ້ໃຫ້ອາດຍາອຸປະຮາດ; ດັ່ງນັ້ນ, ຈຶ່ງຕີລາຄາວ່າສະຫຍາມອາດຈະເອົາໜັງສືເລື່ອງນີ້ໄປຈາກດິນແດນຂອງລາວໃນສົງຄາມສະຫຍາຍໃນລະຫວ່າງປີ ຄສ 1876 ເຊິ່ງກົງກັບສະໄໝກະສັດອົງທີ 5 ຂອງສະຫຍາມດັ່ງກ່າວມາຂ້າງເທິງນີ້.

ສະພາບເປັນເຊັ່ນນັ້ນທ່ານ ມະຫາສີລາ ວິລະວົງ ຈຶ່ງພະຍາຍາມຊຳລະຕົ້ນສະບັບ ແລະຈັດພິມເຜີຍ ແຜ່ຄັ້ງທຳອິດໃນປີ 1943 (ປະເທດໄທ) ຫຼັງຈາກນັ້ນຕໍ່ມາຈຶ່ງໄດ້ຮັບການເຜີຍແຜ່ຂຶ້ນມາເລື້ອຍໆຈົນມາເຖິງປັດຈຸບັນນັກສຶກສາ, ນັກຄົ້ນຄວ້າພວມໄດ້ຮັບຮັບຄວາມສົນໃຈຫຼາຍຂຶ້ນ. (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**3.1.1 ເລື່ອງທ້າວຮຸ່ງ-ທ້າວເຈືອງທັງສາມສະບັບໂດຍສັງເຂບ** (15 ນາທີ)

1) **ສະບັບແຕ່ງເປັນຕຳນານ**

ສະບັບນີ້ມີຢູ່ພິງສາວະດານໂຍນົກ ແຕ່ງໂດຍພະຍາປະກິດກອນຈັກໂດຍອ້າງວ່າເກັບຕຳນານມາຈາກເມືອງເໜືອ (ຕຳນານເມືອງຊຽງແສນ) ຢູ່ໃນຕຳນານນັ້ນເອີ້ນທ້າວ ຮຸ່ງວ່າ "ຂຸນເຈືອງທຳມະລາດ" ໂດຍເນື້ອເລື່ອງຫຍໍ້ດັ່ງນີ້:

ຂຸນເຈືອງເປັນລາຊະໂອລົດຄົນທີ່ໜຶ່ງຂອງຂຸນຈອມທຳເຈົ້າເມືອງພະເຢົາ (ອຳເພີພະເຢົາຈັງວັດຊຽງລາຍຂອງປະເທດໄທດຽວນີ້ ) ແລະ ມີນ້ອງຊາຍຄົນໜຶ່ງຊື່ວ່າ ຂຸນຊອງ.

ຂຸນເຈືອງປະສູດໃນວັນອັງຄານ, ເດືອນ 7 ຂຶ້ນ 1 ຄ່ຳ, ປີລະກາ, ຈຸນລະສັກກຣາດ 461 (ພສ 1641) ເວລາໃກ້ຮຸ່ງ.

ເມື່ອປະສູດອອກມາເທວະດາເອົາຂອງທິບສາມຢ່າງມາມອບໃຫ້ຄື: ແສ້, ດາບ, ຄັນໂທ ແລະ ຍັງໄດ້ຊ້າງເຜືອກໂຕໜຶ່ງຊື່ວ່າຊ້າງພາຍຄຳ. ເມື່ອອາຍຸໄດ້ 16 ປີກໍໄດ້ໄປຄ້ອງຊ້າງຢູ່ເມືອງນ່ານ; ພະຍາພະລະເທວະ ແລະ ເຈົ້າເມືອງເມືອງນ່ານຍົກລູກສາວຊື່ຈັນທະເທວີໃຫ້. ໄປຄ້ອງຊ້າງຢູ່ເມືອງແພ ພະຍາພົມວົງສາ ເຈົ້າເມືອງເອົານາງແກ້ວກະສັດຕີ (ລູກສາວ) ໃຫ້.

ເມື່ອພະບິດາສິ້ນພະຊົນທ້າວ ເຈືອງໄດ້ສະເຫວີຍເມືອງແທນພໍ່. ຕໍ່ມາ 6 ປີພະຍາ ແລະ ພະຍາແອງ ຍົກທັບມາຕີເອົາເມືອງເງິນຍາງ, ເຊິ່ງປັນເມືອງຂອງຂຸນຊິ່ມ. ຂຸນຊິ່ມຈຶ່ງໄດ້ແຕ່ງທູດເຊີນເອົາຂຸນເຈືອງກໍຍົກທັບໄປຕີເມືອງແມນຕາທອກຂອກຟ້າຕາຍືນ ຈຶ່ງຖືກພະຍາແມນຟັນຕາຍຄາຄໍຊ້າງ...

**2) ສະບັບແຕ່ງເປັນຄຳກອນ**

ກ່າວວ່າ ທ້າວຮຸ່ງເປັນໂອລົດຄົນທີ່ສອງຂອງຂຸນຈອມທຳເຈົ້າເມືອງສອນຕານ, ເມືອງນາຄອງ ຫຼື ເມືອງຂາ ຊາຍກໍວ່າມີອ້າຍຊື່ວ່າຂຸນເຈືອງ. ທ້າວຮຸ່ງປະສູດ ໃນວັນອັງຄານໃກ້ຮຸ່ງ, ເດືອນ 5 ເພງ, ປີຂານເມື່ອປະສູດອອກມາ ພວກຂ້າຜາຍດຳເອົາດາບກັບຄ້ອງເງິນຄູ່ໜຶ່ງມາຖວຍ, ຕໍ່ມາກໍໄດ້ຊ້າງພານຄຳ.

ທ້າວຮຸ່ງໃຫຍ່ຂຶ້ນມາຈຶ່ງແຕ່ງເຖົ້າແກ່ໄປຂໍສາວຊື່ນາງ ງ້ອມມ່ອນ ລູກສາວຂອງຂອງພະຍາ ເມັງ ເຈົ້ານະຄອນຊຽງເຄືອທັງເປັນເອື້ອຂອງແມ່ທ້າວຮຸ່ງ, ແຕ່ນັ້ນນາງ ເມັງວາງຄ່າດອງແພງ ທ້າວຮຸ່ງຈຶ່ງຫາວິທີເຂົ້າຫານາງ ງ້ອມມ່ອນຈົນໄດ້ເປັນຊູ້ກັນ.

ຕໍ່ມາພະຍາທ້າວກວ່າເຈົ້ານະຄອນປະກັນມີຫຼານຊາຍຊື່ແອງກາ ເຈົ້ານະຄອນຄຳວັງ, ເຈົ້າກວ່າແຕ່ງທູດມາຂໍນາງ ອົ້ວຄ່າລູກສາວຂອງທ້າວຊືມເຈົ້ານະຄອນເງິນຍາງທັງເປັນອ້າຍຂອງພໍ່ທ້າວຮຸ່ງ, ທ້າວຊືມບໍ່ຍອມໃຫ້, ທ້າວກວ່າຈຶ່ງຍົກທັບມາຕີເມືອງເງິນຍາງ. ທ້າວຊືມຈຶ່ງແຕ່ງທູດໄປເຊີນທ້າວຮຸ່ງໄປຮົບຊ່ວຍ. ທ້າວຮຸ່ງປາບພວກຂ້າເສິກຈົນແຕກ, ທ້າວກວ່າເສຍຊີວິດ, ສ່ວນທ້າວແອງກາຖືກຈັບເປັນສະເລີຍ. ທ້າວຊືມດີໃຈຫຼາຍ ຈຶ່ງເອົານາງອົ້ວ ແລະ ນາງອາຄາໃຫ້ທ້າວຮຸ່ງ. ທ້າວຮຸ່ງນຳຕີຂ້າເສິກເຖິງເມືອງປະກັນໄດ້ຮັບໄຊຊະນະແຕ່ອ້າຍຄຳວາງຄອງເມືອງປະກັນ, ທ້າວຮຸ່ງໄປຄອງເມືອງເງິນຍາງ.

ເຖົ້າແກ່ໄປຂໍນາງງ້ອມມາເປັນມະເຫສີໃຫ້ທ້າວຮຸ່ງອີກ. ຫຼັງຈາກນັ້ນມີຫົວໜ້າແມ່ທັບທັບສອງພວກຂ້າເສິກຊື່ຫຸນບັງ ກັບອ້າຍທີ່ງທີ່ລີບໜີໃນສົງຄາມເມື່ອກ່ອນໄປອາໄສຢູ່ນຳພະຍາຟ້າຮ່ວມບໍ່ຍອມ, ທ້າວຮຸ່ງຈຶ່ງເອົາກຳລັງປິດລ້ອມເມືອງຕຸມວາງ. ສ່ວນພະຍາຮ່ອນແຕ່ງຄົນໃຊ້ໄປເຊີນແຖນລໍຢູ່ເມືອງກາຫລິງ (ເມືອງສຽງຮຸ່ງ) ໃຫ້ມາຕີທ້າວຮຸ່ງຊ່ວຍ. ທ້າວຮຸ່ງຈຶ່ງຖືກແຖນລໍຂ້າຕາຍໃນສະໜາມຮົບ.

**3) ສະບັບແຕ່ງເປັນພາສາບາລີ**

ຢູ່ໃນສະບັບນີ້, ມີຂໍ້ຄວາມຄ້າຍຄືກັນກັບສະບັບແຕ່ງເປັນຄຳກອນແຕ່ຮຽກຊື່ທ້າວຮຸ່ງວ່າ "ເຈືອງລຸນ" ແລະຮຽກຊື່ອ້າຍທ້າວຮຸ່ງວ່າ "ທ້າວເຈືອງ". ດັ່ງນັ້ນ, ສະບັບອາດຈະແຕ່ງສະບັບຄຳກອນຄຳ: ແປຄຳລາວເປັນຄຳບາລີເພື່ອໃຫ້ເກີດຄຳນິຍົມຊົມຊອບຂອງຄົນສະໄໝນັ້ນ.

**3.1.2 ບາງຄຳເຫັນກ່ຽວກັບການກຳເນີດຄຳກອນ** (15 ນາທີ)

<u>ກິດຈະກາ 2:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:
  1) ເລື່ອງທ້າວຮຸ່ງ-ທ້າວເຈືອງແຕ່ງເປັນຄຳກອນແບບໃດ? ແລະກຳເນີດໃນສະໄໝໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: (5 ນາທີ)

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ເລື່ອງທ້າວຮຸ່ງ-ທ້າວເຈືອງແຕ່ງເປັນຄຳກອນເຊິ່ງເອີ້ນວ່າ ກອນວິຊຸມາລີ. ກອນວິຊຸມາລີນີ້ມັນແຕກຕ່າງຈາກຄຳກອນໃນວັນນະຄະດີລາວໃນສະໄໝລ້ານຊ້າງຕາມທີ່ໄດ້ເຫັນມາເພາະວ່າເປັນເລື່ອງທີ່ບໍ່ທັນມີພາສາບາລີປົນເປຢູ່ນຳ, ແຕ່ຄຳກອນບາງບ່ອນກໍມີຄຳໂຄງສຸພາບປົນເປບາງເລັກນ້ອຍ. ຄຳກອນແບບນີ້ເຫັນຢູ່ໃນນິທານນາງຕັນໄຕ ແລະ ຂຸນບູລົມແຕ່ບໍ່ມີຫຼາຍໂດຍອີງໃສ່ເຫດຜົນທີ່ກ່າວມານີ້ຈຶ່ງສັນນິຖານວ່າຄຳກອນທ້າວຮຸ່ງ-ທ້າວເຈືອງອາດແຕ່ງຂຶ້ນໃນສະໃນສະໄໝດຽວກັນເລື່ອງຂຸນບູລົມ, ນາງຕັນໄຕ ແລະ ພະເວດສັນດອນ.

ຄຳກອນເລື່ອງນີ້ນັບໄດ້ວ່າເປັນຄຳກອນຊັ້ນຍອດຂອງລາວອີກສະບັບໜຶ່ງຄືກັບເລື່ອງສິນໄຊ ແລະ ພະເວດສັນດອນ,ແຕ່ມີລົດໄປຄົນລະທາງເທົ່ານັ້ນ, ເມື່ອໄດ້ອ່ານ ແລະ ເຂົ້າໃຈເລື່ອງນີ້ກໍຈະຮູ້ໄດ້ວ່າມັນມ່ວນຫຼາຍໃຫ້ທັງຄວາມສຸກ,ຄວາມອັດສະຈັນ ແລະ ບັນເທີງໄປພ້ອມໆກັນ, ອີກປະການໜຶ່ງເລື່ອງນີ້ກໍຍັງຖືວ່າເປັນກົກເຄົ້າເຫງົ້າກໍຂອງການຖືຜີດຳ, ຜີຟ້າ-ຜີແຖນຂອງບັນດາຊົນເຜົ່າຕ່າງຈົນເຖິງປັດຈຸບັນນີ້.

**3.1.3 ບາງຄຳເຫັນກ່ຽວກັບຕົວລະຄອນທ້າວຮຸ່ງ** (15 ນາທີ)

ພິງສາວະດານໂຍນົກ ທີ່ພະຍາປະຊາກັດ ວໍລະຈັນຮັບໂຮມຈາກຕຳນານເມືອງເໜືອຂອງໄທ ເອີ້ນວ່າ ຂຸນເຈືອງ ແລະ ເປັນຄົນໄທ (ໄທລ້ານນາ) ທີ່ສືບເຊື້ອມາຈາກພະເຈົ້າ ລະວ້າ ຈັນກະເທວະລາດຜູ້ສ້າງໃນປີ ຄສ 638 (ພສ 1181, ຈສ 1) ຂຸນເຈືອງເປັນວຸດຂອງຂຸນຈອມທຳເຈົ້າເມືອງພູກ້າມຍາວ, ອຳເພີພະເຢົາ, ຈັງວັດຊຽງລາຍ (ໃນປັດ ຈຸບັນ). ທ້າວຮຸ່ງເກີດເມື່ອເດືອນ 5 ປີເຖາະ ຈສ 461 ຄສ 1099.

ເຖິງຢ່າງໄດ້ກໍຕາມອີງໃສ່ຄຳເຫັນຂອງ ມະຫາສີລາ ວິລາວົງ "ທ້າວຮຸ່ງເປັນຄົນເຊື້ອຊາດຂອມ ຫຼື ມອນ ເມື່ອອີງຕາມເຫດຜົນດັ່ງນີ້".

1) ໃນລະຫວ່າງ ຄສ 657 ເປັນຕົ້ນພວກຂອມໄດ້ແຜ່ອຳນາດໄປທາງພາກເໜືອດັ່ງຢູ່ໃນໜັງສືເລື່ອງຈາມເທວີທີ່ພະໂພທິລັງສີຂຽນໃນ ຄສ 661 (ພສ 1204) ພະຍາຂອມເປັນເຈົ້າແຜນດິນເມືອງລະໂວ້ (ລົບບູລີ) ໄດ້ສົ່ງລູກສາວນາງຈາມເທວີໄປຄອງເມືອງນີ້ສືບມາຮອດ ຄສ 740 (ພສ 1283) ແລະອິນເທວະຣະມັນເປັນເຈົ້າເມືອງຊຽງລາຍ (ນະຄອນລຳປາງ) ໃນສະໄໝດຽວກັນ.

2) ຄຳກອນໃນເລື່ອງທ້າວຮຸ່ງບາງຕອນກໍໄດ້ບອກໄວ້ຢ່າງຈະແຈ້ງວ່ານາງງ້ອມເມຍຂອງທ້າວຮຸ່ງເປັນເຊື້ອຊາດຂອມດັ່ງຄຳກອນວ່າ:

ຄືດັ່ງຢາດແຕ່ຟ້າສະເດັດທ່ອງ ທາງດິນ

ໂສມຄານຄວນຄາດເຈືອງ ທຽມທ້າວ

ນັກສະໜົມເນື້ອນາລີ ຮຽງຮອບ

ກາກ່ອງກ້າວ (ງາມລໍ້າ) ລູກຂອມ (ທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ1:108)

ນາງງ້ອມເປັນລູກຂອງນາງເມັງກໍເປັນປ້າ ຫຼື ເອື້ອຍແມ່ທ້າວຮຸ່ງ, ຢູ່ໃນໜັງສືພື້ນທ້າວຮຸ່ງເອີ້ນແມ່ນາງງ້ອມວ່ານາງເມັງດັ່ງນັ້ນ, ຄຳວ່າ "ເມັງ" ກໍແມ່ນມອນບາງບ່ອນຄຳກອນກໍວ່າ "ກາກ່ອງເນື້ອນອນແນບນາງມອນ". ຄຳວ່າເມັງ, ມອນກໍແມ່ນຄຳດຽວກັນກັບຄຳວ່າ "ຂອມ, ເຂມ, ຂະແມ ຫຼື ຂະເໝນ" ຢູ່ໃນຄຳກອນກໍມີຄຳວ່າ "ໝູ່ຂອມເຂມຫໍ້".

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

3) ຢູ່ເຂດພູດອຍຂອງເມືອງພະເຢົາ ກອງຄົ້ນຄວ້າບູຮານຄະດີຂອງໄທກໍໄດ້ຄົ້ນພົບເຄື່ອງທີ່ເຮັດດ້ວຍຫີນເຊັ່ນ: ຄົກ, ສາກ, ລູກຫີນບົດຢ່າງຫຼວງຫຼາຍເຊິ່ງເປັນສີມືຂອງພວກຂອມທັງໝົດ.

4) ໃນຄຳກອນເລື່ອງທ້າວຮຸ່ງມີບາງບ່ອນກໍໄດ້ກ່າວໄວ້ໂດຍສະເພາະຕອນທ້າວກ່າວຍົກທັບໄປຕີເມືອງເງິນຍາງ, ທ້າວກວ່າໄປຮ້ອງຂໍອ້າຍຫາດ ແລະສາມມະເສັງຂ້າພູທຸນເພື່ອໄປຕີເມືອງເງິນຍາງ. ອ້າຍຫາດ ແລະສາມມະເສັງເຫັນວ່າຂຸນຊຶນເປັນເຊື້ອຊາດດຽວກັບຕົນ ແລະ ເຄີຍໄດ້ເພິ່ງພາອາໄສກັນຕາມຫຼັງມາຈຶ່ງໄປເຂົ້າກັບກອງທັບເມືອງເງິນຍາງເພື່ອຕີຕ້ານກັບກອງທັບຂອງທ້າວກວ່າ ແລະ ແອງກາ.

ພວກຊຶນເຜົ່າພູດອຍ (ເຜົ່າລາວກາງ) ມີບາງເຜົ່າກໍຖືວ່າແມ່ນຄົນເຊື້ອຊາດມອນຂະແມ. ດັ່ງນັ້ນ, ຕະກຸນຂອງ ທ້າວຮຸ່ງ ຫຼືຊາວເມືອງເງິນຍາງ, ເມືອງຊຽງເຄືອ (ຊຽງແສນ, ຊຽງລາຍ) ໃນສະໄໝນັ້ນອາດຈະແມ່ນມອນ ຫຼື ຂອມເພາະສາວພູດອຍ, ພູທຸມຖືວ່າເປັນເຜົ່າດຽວກັນ ແລະ ພວກລາວກາງ (ເຜົ່າຈະຣາຍ) ເຂົາເຈົ້າກໍຍັງຖືຜີເຈືອງ ຫຼື ຂຸນເຈືອງວ່າເປັນກະສັດຂອງພວກເຂົາສືບມາຈົນຮອດປັດຈຸບັນນີ້.

ເຖິງວ່າຢ່າງໃດກໍຕາມຕົວລະຄອນທ້າວຮຸ່ງຈະເປັນເຜົ່າໃດ, ເຊື້ອຊາດໃດ ແລະ ເກີດເມື່ອໃດພຽງແຕ່ເປັນການຕີລາຄາ - ສັນນິຖານຕາມເນື້ອໃນຂອງເລື່ອງ ແລະ ອີງຕາມຕຳນານ, ເອກະສານອ້າງອີງອື່ນໆຕາມເຫດຜົນ. (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

## III. ຂັ້ນສະຫຼຸບ

❖ **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ເລື່ອງທ້າວຮຸ່ງ-ທ້າວເຈືອງທັງສາມສະບັບໂດຍສັງເຂບ
- ບາງຄຳເຫັນກ່ຽວກັບການກຳເນີດຄຳກອນ
- ບາງຄຳເຫັນກ່ຽວກັບຕົວລະຄອນທ້າວຮຸ່ງ

## IV. ວັດ ແລະປະເມີນ

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄາຖາມ: ແຕ່ລະຂໍ້ຂອງບົດຮຽນ?
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄາຕອບ ແລະ ສະຫຼຸບຄືນ

## V. ຂັ້ນຕັກເຕືອນ

- ຄູແນະນານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ (2000) ມະຫາກາບທ້າວຮຸ່ງ-ທ້າວເຈືອງ ເຫຼັ້ມ 1. ຫໍສະໝຸດແຫ່ງຊາດ.

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ